# ແຜນປະກັນສຸຂະພາບລັດໂອເຣກອນ (OHP) ສະບັບປັບປຸງ

## ທ່ານມີພຽງແຕ່ OHP Dental ເທົ່ານັ້ນບໍ່?

ເລີ່ມຈາກວັນທີ 1 ມັງກອນ 2023, OHP ຈະສະເໜີໃຫ້ຜົນປະໂຫຍດທາງທັນຕະກຳເທົ່ານັ້ນໃຫ້ກັບສະມາຊິກ (“OHP Dental”). ຖ້າໜ້າໃບຈົດໝາຍການຄຸ້ມຄອງ OHP ຂອງທ່ານສະແດງຄຳວ່າ “OHP Dental” ໂດຍຊື່ຂອງທ່ານ:

- ຜົນປະໂຫຍດທາງທັນຕະກຳແມ່ນອັນດຽວກັນກັບ OHP ເຕັມຮູບແບບ (“OHP Plus”) ສຳລັບຜູ້ໃຫຍ່.
- ຜົນປະໂຫຍດທາງທັນຕະກຳຂອງ OHP ລວມມີການທຳຄວາມສະອາດແຂ້ວ, ການກວດ ແລະ ການເອັກຊ໌ເຣແຂ້ວ, ການອັດຮູແຂ້ວ, ການຫຼົກແຂ້ວ, ການປິ່ນປົວແຂ້ວສຸກເສີນ ແລະ ການໃສ່ແຂ້ວປອມບາງປະເພດ.
- “OHP Dental” ບໍ່ໃຫ້ການຄຸ້ມຄອງການເບິ່ງແຍງສຸຂະພາບກາຍ ແລະ ສຸຂະພາບຈິດ.

ຮຽນຮູ້ເພີ່ມເຕີມກ່ຽວກັບຜົນປະໂຫຍດທາງທັນຕະກຳຈາກ OHP ໄດ້ທີ່ **OHP.Oregon.gov** (ຄລິກໃສ່ “ຜົນປະໂຫຍດ OHP”).

## ໃຜໃຫ້ການຄຸ້ມຄອງການດູແລ OHP Dental?

ທ່ານຈະໄດ້ຮັບຊຸດເອກະສານຕ້ອນຮັບຈາກອົງການເບິ່ງແຍງດູປະສານງານ (CCO) ຂອງທ່ານ. ຊຸດເອກະສານຈະປະກອບມີບັດສະມາຊິກ CCO ຂອງທ່ານ ແລະ ຂໍ້ມູນກ່ຽວກັບການບໍລິການທີ່ຄຸ້ມຄອງ.

- ຊື່ຂອງ CCO ຈະມີຢູ່ໃນໜ້າທີ 4 ຂອງຈົດໝາຍການຄຸ້ມຄອງຂອງທ່ານ. ມັນຈະມີ “CCOF” ກ່ອນຊື່ຂອງ CCO.
- ທ່ານສາມາດໂທຫາ CCO ຂອງທ່ານໄດ້, ຖ້າທ່ານມີຄຳຖາມກ່ຽວກັບການຊອກຫາທັນຕະແພດ ຫຼື ການປິ່ນປົວແຂ້ວ.

Moda Health ຈະໃຫ້ການຄຸ້ມຄອງຢາທີ່ທັນຕະແພດຂອງທ່ານອາດຈະສັ່ງໃຫ້ເຊັ່ນ: ຢາຕ້ານເຊື້ອ ຫຼື ຢາແກ້ປວດ. ທ່ານຈະໄດ້ຮັບບັດປະຈຳຕົວ Moda Health ພາຍໃນສອງ ຫຼື ສາມອາທິດ.

Moda Health ຈະ**ບໍ່**ຄຸ້ມຄອງ:

- ການສັ່ງຢາເພີ່ມ ຫຼື ການສັ່ງຢາສຳລັບຫຼາຍກວ່າ 30 ວັນຂຶ້ນໄປ.
- ການສັ່ງຢາສຳລັບຢາຖູແຂ້ວຊະນິດນໍ້າ ຫຼື ຢາບ້ວນປາກ.

ທ່ານສາມາດຮັບເອົາເອກະສານສະບັບນີ້ເປັນພາສາອື່ນ, ຕົວພິມໃຫຍ່ ຫຼື ວິທີອື່ນໆທີ່ດີທີ່ສຸດສຳລັບທ່ານໄດ້. ໂທ 800-699-9075 (TTY 711).

ເມື່ອທ່ານຕໍ່ຢາຈາກທັນຕະແພດຂອງທ່ານ:

- ສະແດງບັດ Moda ໃຫ້ແພດການຢາ.
- ສະແດງບັດອື່ນໆທີ່ທ່ານມີສໍາລັບແຜນຄຸ້ມຄອງສຸຂະພາບ. ຖ້າທ່ານມີແຜນປະກັນທາງການແພດ, ແຜນປະກັນນັ້ນຈະຈ່າຍຄ່າຢາຕາມແພດສັ່ງໃຫ້ທ່ານ.

**ຖ້າທ່ານເປັນຄົນອາເມຣິກາເຊື້ອສາຍອິນເດຍ ຫຼື ຄົນພື້ນເມືອງອາລາສກ້າ ແລະ ບໍ່ມີ CCO:**

ທ່ານສາມາດຂໍລົງທະບຽນເຂົ້າ CCO ເພື່ອຜົນປະໂຫຍດ OHP Dental ຂອງທ່ານ.
ໂທຫາໜ່ວຍບໍລິການລູກຄ້າ OHP ທີ່ເບີ 800-273-0557.

## ຜົນປະໂຫຍດ OHP Plus ສໍາລັບເດັກ ແລະ ໄວໜຸ່ມອາຍຸເຖິງ 21 ປີ

OHP ຄຸ້ມຄອງການບໍລິການທຸກຢ່າງທີ່ຈໍາເປັນສໍາລັບສຸຂະພາບ ແລະ ການພັດທະນາຂອງເດັກ ແລະ ໄວໜຸ່ມ. ການບໍລິການເຫຼົ່ານີ້ເອີ້ນວ່າຜົນປະໂຫຍດໃນການກວດ, ການບົ່ງມະຕິ ແລະ ການປິ່ນປົວເບື້ອງຕົ້ນ ແລະ ເປັນໄລຍະ (EPSDT).

ສໍາລັບເດັກ ແລະ ໄວໜຸ່ມອາຍຸຕໍ່າກວ່າ 21 ປີທີ່ມີ OHP ເຕັມຮູບແບບ (“OHP Plus”):

- OHP ຄຸ້ມຄອງການບໍລິການທຸກຢ່າງທີ່ຈໍາເປັນເພື່ອຊອກຫາ ຫຼື ປິ່ນປົວຄວາມເຈັບເປັນ, ການບາດເຈັບ ຫຼື ການປ່ຽນແປງອື່ນໆທາງດ້ານສຸຂະພາບ.
- ເລີ່ມແຕ່ວັນທີ 1 ມັງກອນ 2023, ອາດຄຸ້ມຄອງການບໍລິການ OHP ທີ່ບໍ່ໄດ້ຮັບຄຸ້ມຄອງມາກ່ອນອີງຕາມຄວາມຕ້ອງການສ່ວນຕົວຂອງເດັກ ແລະ ປະຫວັດການປິ່ນປົວ.

ຮຽນຮູ້ເພີ່ມເຕີມທີ່ **Oregon.gov/EPSDT.**

**OHP.Oregon.gov**